ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 4490 /ກງ
ນະຄອນຫຼວງວຽງຈັນ, ວັນທີ 14 ກັນຍາ 2021

# ຄຳແນະນຳ

## ວ່າດ້ວຍການຄຸ້ມຄອງ, ຊຸກຍູ້ສົ່ງເສີມ, ອຳນວຍຄວາມສະດວກ ດ້ານພາສີ-ອາກອນ ຕໍ່ຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ເຄື່ອງຂອງ

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການເງິນ;
- ອີງຕາມ ຜົນຂອງກອງປະຊຸມຮ່ວມລະຫວ່າງກະຊວງການເງິນ, ຕົວແທນພາກທຸລະກິດ ນຳເຂົ້າ-ສົ່ງອອກ ແລະ ພາກສ່ວນກ່ຽວຂ້ອງ, ຄັ້ງວັນທີ 03 ສິງຫາ 2021.

ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ, ຊຸກຍູ້ສົ່ງເສີມຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ໃນການເຄື່ອນໄຫວທຸລະກິດໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງນີ້:**

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ຜ່ານດ່ານຊາຍແດນ ເພື່ອອຳນວຍຄວາມສະດວກດ້ານພາສີ, ການຄ້າ, ການລົງທຶນ, ແນໃສ່ສ້າງສິ່ງອຳນວຍຄວາມສະດວກ, ເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງຫົວໜ່ວຍທຸລະກິດພາຍໃນປະເທດ ຕາມກົດໝາຍ ແລະ ລະບຽບການ.

### 2. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ເພື່ອສະໜອງຢູ່ພາຍໃນປະເທດ ຊຶ່ງມີເງື່ອນໄຂ ແລະ ມາດຖານຄົບຖ້ວນ ທີ່ກຳນົດໄວ້ໃນລະບຽບການສະບັບນີ້ ຫຼື ຜູ້ປະກອບການມາດຕະຖານເອອີໂອ (Authorized Economic Operator).

### 3. ຫຼັກການ

- ເດັດຂາດ, ເຂັ້ມງວດ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;
- ໂປ່ງໃສ, ສາມາດກວດສອບໄດ້ ແລະ ເປັນທັນສະໄໝ;
- ຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ.

### 4. ເງື່ອນໄຂ ແລະ ມາດຖານ ຂອງຫົວໜ່ວຍທຸລະກິດ

4.1 ມີໃບອະນຸຍາດດຳເນີນທຸລະກິດຂາເຂົ້າ-ຂາອອກ ແລະ ເລກປະຈຳຕົວຜູ້ເສຍອາກອນ;

4.2 ມີໃບຢັ້ງຢືນການຖືບັນຊີ ຊຶ່ງອອກໃຫ້ໂດຍຂະແໜງບັນຊີ, ພ້ອມທັງມີບົດກວດສອບເອກະສານລາຍງານການເງິນ ຈາກບໍລິສັດກວດສອບ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍຂອງ ສປປລາວ;

4.3 ມີໃບຢັ້ງຢືນການມອບພັນທະອາກອນປະຈໍາປີ, ການຊໍາລະສະສາງຜ່ານລະບົບທະນາຄານ ຊື້ອອກຊື່ບັນຊີໃນນາມບໍລິສັດເອງ;

4.4 ມີໃບຢັ້ງຢືນເຂົ້າໃນລະບົບອາກອນມູນຄ່າເພີ່ມ ອອກໃຫ້ໂດຍລັດຖະການສ່ວຍສາອາກອນ;

4.5 ເປັນຜູ້ແຈ້ງພາສີທົ່ວໄປ ຫຼື ມີຕົວແທນເປັນຜູ້ບໍລິການແຈ້ງພາສີ ທີ່ໄດ້ຮັບອະນຸຍາດຈາກລັດຖະການພາສີ;

4.6 ຕ້ອງມີລະບົບຄຸ້ມຄອງຖານຂໍ້ມູນສາງສິນຄ້າ ທີ່ມີການບັນທຶກບັນຊີເຂົ້າ-ອອກສາງ ແລະ ສາມາດເຊື່ອມຕໍ່ກັບລະບົບ TaxRis ຂອງຂະແໜງສ່ວຍສາອາກອນ;

4.7 ຕ້ອງມີລະບົບບັນທຶກການຂາຍ ຕາມລະບຽບການກໍານົດໄວ້ ໃນຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1179/ກງ, ລົງວັນທີ 20 ເມສາ 2017 ຫຼື ຕາມການຢັ້ງຢືນ ແລະ ອະນຸມັດຈາກລັດຖະການສ່ວຍສາອາກອນ;

4.8 ການບັນຈຸ, ຫຸ້ມຫໍ່ ສິນຄ້າ, ເຄື່ອງຂອງ ຕ້ອງມີເຄື່ອງໝາຍ ແລະ ເລກໝາຍສະເພາະຕາມມາດຕະຖານສາກົນ, ບໍ່ໃຫ້ໂຮມເອົາຫຼາຍຊະນິດ ສິນຄ້າ ທີ່ແຕກຕ່າງກັນ ເຂົ້າໃນຫີບຫໍ່ດຽວ ແລະ ບໍ່ໃຫ້ມີການດັດແປງພາຊະນະບັນຈຸສິນຄ້າ;

ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ຮ່ວມກັນປະເມີນ ແລະ ຢັ້ງຢືນເງື່ອນໄຂຂ້າງເທິງນີ້ ເປັນແຕ່ລະປີ.

## 5. ຫົວໜ່ວຍທຸລະກິດ ທີ່ມີເງື່ອນໄຂ ແລະ ມາດຖານ ຈະໄດ້ຮັບການອໍານວຍຄວາມສະດວກ ດັ່ງນີ້:

5.1 ໄດ້ຮັບການອໍານວຍຄວາມສະດວກ ຈາກລັດຖະການພາສີ ໃນການດໍາເນີນການກວດກາຮັບຮອງເອກະສານການແຈ້ງພາສີລ່ວງໜ້າ ຕາມລະບຽບການ;

5.2 ໄດ້ຮັບການອໍານວຍຄວາມສະດວກ ຈາກລັດຖະການພາສີ ໃນການດໍາເນີນລະບຽບການທາງພາສີ ເຊັ່ນ: ການກວດກາຂໍ້ມູນ, ເອກະສານແຈ້ງພາສີ, ການກວດກາສິນຄ້າ, ເຄື່ອງຂອງ ຕົວຈິງ ຢູ່ດ່ານພາສີສາກົນບ່ອນນໍາເຂົ້າ ຕາມການບໍລິຫານຄວາມສ່ຽງ (ສີຂຽວ);

5.3 ການກວດກາສິນຄ້າ, ເຄື່ອງຂອງ ລົງສາງຂອງບໍລິສັດນໍາເຂົ້າ ແມ່ນໃຫ້ປະຕິບັດຕາມການບໍລິຫານຄວາມສ່ຽງຂອງລັດຖະການພາສີ ແລະ ສ່ວຍສາອາກອນ;

5.4 ໄດ້ຮັບການອໍານວຍຄວາມສະດວກ ຈາກລັດຖະການພາສີ ແລະ ສ່ວຍສາອາກອນ ໃນການບໍລິການນອກໂມງລັດຖະການ ກໍລະນີມີຄວາມຈໍາເປັນຮີບດ່ວນ ດ້ວຍການແຈ້ງຂໍ້ມູນການນໍາເຂົ້າລ່ວງໜ້າ;

5.5 ໄດ້ຮັບການອໍານວຍຄວາມສະດວກ ຈາກລັດຖະການພາສີ ແລະ ສ່ວຍສາອາກອນ ດັ່ງນີ້: ຄ່າພາສີ (ຖ້າມີ), ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ທີ່ຕິດພັນກັບຍອດນໍາເຂົ້າ ໃຫ້ມາແຈ້ງ-ມອບໃນເວລາມີການສະໜອງ ສິນຄ້າ, ເຄື່ອງຂອງ ຜ່ານລະບົບ TaxRis ພາຍໃນກໍານົດບໍ່ເກີນ 30 ວັນ ຫຼັງຈາກນໍາເຂົ້າ;

5.6 ສາມາດສະເໜີ ແລະ ຖືກຮັບຮອງຈາກລັດຖະການພາສີ ເປັນຜູ້ປະກອບການມາດຕະຖານ ເອອີໂອ (Authorized Economic Operator).

## 6. ຂັ້ນຕອນການຈັດຕັ້ງປະຕິບັດ

### 6.1 ການແຈ້ງພາສີນໍາເຂົ້າ

ການແຈ້ງພາສີເປັນລາຍລະອຽດ ໃນເວລານໍາເຂົ້າສິນຄ້າ, ເຄື່ອງຂອງ ສາມາດແຈ້ງຜ່ານລະບົບອີເລັກໂຕຣນິກ (ອາຊີກູດາ ແລະ ລະບົບການແຈ້ງພາສີປະຕູດຽວແຫ່ງຊາດ) ຕາມແບບພິມໃບແຈ້ງພາສີເອກະພາບອາຊຽນ ທີ່ກໍານົດໄວ້ໃນລະບົບ ຫຼື ໃນກໍລະນີຈໍາເປັນ ເຊັ່ນ: ລະບົບສັນຍານອິນເຕີເນັດ, ກະແສໄຟຟ້າຂັດຂ້ອງ ແມ່ນສາມາດແຈ້ງແບບທົ່ວໄປທີ່ຂຽນດ້ວຍມື. ເອກະສານການແຈ້ງພາສີເປັນລາຍລະອຽດ ປະກອບມີ:

- ແບບພິມການແຈ້ງພາສີເປັນລາຍລະອຽດ;
- ໃບແຈ້ງລາຄາສິນຄ້າ, ເຄື່ອງຂອງ (Invoice);
- ໃບລາຍການຫຸ້ມຫໍ່;
- ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ໃນກໍລະນີຕ້ອງການສິດທິພິເສດທາງດ້ານອັດຕາພາສີ;
- ໃບອະນຸຍາດ ແລະ/ຫຼື ໃບຢັ້ງຢືນການນໍາເຂົ້າ ໃນກໍລະນີເປັນສິນຄ້າປະເພດຄວບຄຸມ.

6.2 ການກວດກາສິນຄ້າ, ເຄື່ອງຂອງຕົວຈິງ ຢູ່ດ່ານພາສີສາກົນບ່ອນນຳເຂົ້າ ໃຫ້ປະຕິບັດຕາມການບໍລິຫານຄວາມສ່ຽງລະດັບຕ່ຳ (ສີຂຽວ);

6.3 ບັນທຶກສິນຄ້າເຂົ້າ-ອອກສາງ ຕາມລະບົບບັນຊີສາງຢ່າງລະອຽດ ແລະ ສະໜອງຂໍ້ມູນດັ່ງກ່າວ ໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ ເພື່ອບໍລິຫານຄວາມສ່ຽງໃນການກວດກາສິນຄ້າເຂົ້າ-ອອກ ສາງ;

6.4 ເຊື່ອມໂຍງລະບົບການຂາຍ (ສະໜອງ) ສິນຄ້າ, ເຄື່ອງຂອງ ກັບ ລະບົບ TaxRIS ຂອງລັດຖະການສ່ວຍສາອາກອນ ໂດຍການສ້າງ API (Application Programming Interface) ເພື່ອຮັບ-ສົ່ງຂໍ້ມູນການຂາຍແບບເອເລັກໂຕຣນິກ; ໃນກໍລະນີລະບົບບໍ່ສາມາດເຊື່ອມຕໍ່ໄດ້ ລັດຖະການສ່ວຍສາອາກອນ ຈະອະນຸຍາດໃຫ້ມີການປັບປຸງ ເພື່ອໃຫ້ສາມາດເຊື່ອມຕໍ່ໄດ້ ພາຍໃນກຳນົດເວລາ 03 ເດືອນ. ໃນໄລຍະມີການປັບປຸງ ເຈົ້າໜ້າທີ່ສ່ວຍສາອາກອນ ສາມາດເຂົ້າເຖິງຂໍ້ມູນ ແລະ ກວດກາຂໍ້ມູນໃນລະບົບບັນທຶກການຂາຍ ຂອງຫົວໜ່ວຍທຸລະກິດ;

6.5 ນຳໃຊ້ໃບເກັບເງິນ ຕາມລະບຽບການຂອງ ກະຊວງການເງິນ ກຳນົດອອກ. ໃນກໍລະນີ ຫາກຫົວໜ່ວຍທຸລະກິດ ມີຄວາມຕ້ອງການຈັດພິມໃບເກັບເງິນ ຫຼື ນຳໃຊ້ເຄື່ອງບັນທຶກການຂາຍທີ່ມີລະບົບໃບເກັບເງິນຕໍ່ເນື່ອງເປັນຂອງຕົນເອງ ຕ້ອງສະເໜີຕໍ່ລັດຖະການສ່ວຍສາອາກອນ ເພື່ອກວດກາ ແລະ ອະນຸຍາດນຳໃຊ້ ເພື່ອເປັນຂໍ້ມູນໃນການລົງບັນຊີໃຫ້ພາກສ່ວນກ່ຽວຂ້ອງຮັບຮູ້ ແລະ ກວດກາໄລ່ລຽງ ໃນການຢັ້ງຢືນການເສຍພັນທະ;

6.6 ການຄິດໄລ່ອາກອນມູນຄ່າເພີ່ມ ຕ້ອງປະຕິບັດດັ່ງນີ້:

- ຕ້ອງບັນທຶກລາຍການເຄື່ອນໄຫວ ສົ້ນອອກ-ສົ້ນເຂົ້າ ຕາມລາຍການທີ່ເກີດຂຶ້ນ ຕາມໃບເກັບເງິນທີ່ລັດຖະການສ່ວຍສາອາກອນອະນຸຍາດ;
- ໃນກໍລະນີ ມີອາກອນມູນຄ່າເພີ່ມ ໃນຍອດນຳເຂົ້າສິນຄ້າ, ເຄື່ອງຂອງ (ອມພ ສົ້ນເຂົ້າ) ຫາກໜ້ອຍກວ່າອາກອນມູນຄ່າເພີ່ມຍອດຂາຍ (ອມພ ສົ້ນອອກ) ຜົນລົບຈະອອກມາເປັນຄ່າບວກ ແມ່ນມອບເຂົ້າງົບປະມານແຫ່ງລັດ ຜ່ານລະບົບ TaxRIS ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ;
- ໃນກໍລະນີ ມີອາກອນມູນຄ່າເພີ່ມ ໃນຍອດນຳເຂົ້າສິນຄ້າ, ເຄື່ອງຂອງ (ອມພ ສົ້ນເຂົ້າ) ຫາກຫຼາຍກວ່າອາກອນມູນຄ່າເພີ່ມ ຍອດຂາຍ (ອມພ ສົ້ນອອກ) ຜົນລົບຈະອອກມາເປັນຄ່າລົບ ແມ່ນສາມາດຍົກໄປຫັກຕໍ່ໃນເດືອນຕໍ່ໄປ ແຕ່ຕ້ອງມີການສະຫຼຸບສິນຄ້າຄ້າງສາງ ເປັນແຕ່ລະເດືອນ; ໃນກໍລະນີຫັກບໍ່ໝົດພາຍໃນສາມເດືອນຕິດຕໍ່ກັນ ໃຫ້ຍື່ນຟອມໃບແຈ້ງ ເພື່ອຂໍຄືນອາກອນມູນຄ່າເພີ່ມ;
- ໃນກໍລະນີ ອາກອນມູນຄ່າເພີ່ມ ສົ້ນເຂົ້າ ທີ່ຕິດພັນກັບ ສິນຄ້າ, ເຄື່ອງຂອງ ຄ້າງສາງ ຫຼື ຢູ່ໜ້າຮ້ານ ແມ່ນສາມາດຫັກກັບເບື້ອງສົ້ນອອກ ໄດ້ໃນເວລາຂາຍຕົວຈິງແຕ່ລະປະເພດສິນຄ້າ ແຕ່ຕ້ອງມີເອກະສານຢັ້ງຢືນຢ່າງຄົບຖ້ວນ; ໃນກໍລະນີຫາກສິນຄ້າຍັງບໍ່ໄດ້ຂາຍ ແມ່ນບໍ່ອະນຸຍາດໃຫ້ຫັກ;

6.7 ແຈ້ງ-ມອບອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຜ່ານລະບົບ TaxRIS ແລະ ຊຳລະຜ່ານລະບົບທະນາຄານ ເຊັ່ນ: EasyTax, IBanking ຫຼື Application ເທິງມືຖື ທີ່ທະນາຄານທຸລະກິດ ພັດທະນາ ແລະ ສ້າງຂຶ້ນ;

6.8 ຕ້ອງສະຫຼຸບ ແລະ ຍື່ນບົດລາຍງານການເງິນ ປະຈຳປີ ຕາມກົດໝາຍ ແລະ ລະບຽບການກຳນົດ;

6.9 ເກັບຮັກສາ, ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນເອກະສານ ການແຈ້ງພາສີ ໃນເວລານຳເຂົ້າ, ເອກະສານປະກອບຄົບຊຸດ ແລະ ຂໍ້ມູນກ່ຽວກັບການມອບພັນທະ ເພື່ອເປັນຂໍ້ມູນໃຫ້ແກ່ລັດຖະການພາສີ ແລະ ສ່ວຍສາອາກອນ ໃນການກວດກາຄືນ ຕາມກົດໝາຍ ແລະ ລະບຽບການກຳນົດ.

## 7. ຂັ້ນຕອນການສະເໜີຂໍເຂົ້າຮ່ວມໂຄງການ

ຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈ, ປະກອບມາດຖານ, ເງື່ອນໄຂຄົບຖ້ວນ ສາມາດສະເໜີຫາ ກົມສ່ວຍສາອາກອນ ເພື່ອພິຈາລະນາຄົ້ນຄວ້າອະນຸມັດ ຕາມເງື່ອນໄຂ ແລະ ມາດຖານ ທີ່ກຳນົດໃນຂໍ້ 4 ຂອງຄຳແນະນຳສະບັບນີ້ ແລະ ເຊັນສັນຍາຮ່ວມກັບກົມສ່ວຍສາອາກອນໃນການຈັດຕັ້ງປະຕິບັດ.

## 8. ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### 8.1 ການຍ້ອງຍໍຕໍ່ຜູ້ມີຜົນງານ

ບັນດາຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ທີ່ປະຕິບັດມາດຖານເງື່ອນໄຂ ແລະ ມາດຖານ ທີ່ກຳນົດໄວ້ໃນຂໍ້ 4 ຂ້າງເທິງນີ້, ຫາກໄດ້ຮັບການປະເມີນຜົນ 02 ປີຕໍ່ເນື່ອງ ຈະໄດ້ຮັບການຍ້ອງຍໍດັ່ງນີ້:

- ໃບຍັ້ງຢືນໄລ້ກຽດຕິຄຸນ (ບັດຄຳ), ໄດ້ຮັບບຸລິມະສິດ ແລະ ຈັດອັນດັບຄວາມໜ້າເຊື່ອຖື ຕາມລະບຽບການ;
- ຍ້ອງຍໍໃນລະດັບຕ່າງໆ ຈາກລັດຖະບານ;
- ນະໂຍບາຍອື່ນໆ ທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ.

### 8.2 ມາດຕະການຕໍ່ຜູ້ລະເມີດ

ບັນດາຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ທີ່ມີເງື່ອນໄຂ, ມາດຖານ ຄົບຖ້ວນ ໃນຂໍ້ທີ 4 ແລະ ໄດ້ຮັບນະໂຍບາຍອຳນວຍຄວາມສະດວກ ຕາມທີ່ກຳນົດໄວ້ ໃນຂໍ້ທີ 5 ຂ້າງເທິງນີ້, ຖ້າມີການລະເມີດ ຂໍ້ໃດໜຶ່ງ ຕາມຜົນການກວດກາຕາມຕົວຊີ້ວັດ ຈະຖືກປະຕິບັດ ດັ່ງນີ້:

1. ຈະຖືກກ່າວເຕືອນ ຫຼື ແນະນຳໃຫ້ດຳເນີນການປັບປຸງ, ແກ້ໄຂ;
2. ຈະຖືກຕັດສິດອອກຈາກ ເງື່ອນໄຂ, ມາດຖານ ໃນຂໍ້ທີ 4 ແລະ ການອຳນວຍຄວາມສະດວກ ໃນຂໍ້ທີ 5 ຂ້າງເທິງ ພ້ອມທັງຈະຖືກດຳເນີນຄະດີ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍຂົງເຂດສ່ວຍສາອາກອນ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## 9. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ຕຸລາ 2021 ເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນໂຈມ ອຸບົນປະເສີດ